ໂຮງຮຽນ **LOWELL PUBLIC SCHOOLS**
Henry J. Mroz Central Administration Offices
(ສໍານັກງານບໍລິຫານສ່ວນກາງ)
155 Merrimack Street
Lowell, MA 01852

ວັນທີ 9 ຕຸລາ 2020

ເຖິງບັນດາຄອບຄົວຂອງນັກຮຽນໂຮງຮຽນ Lowell Public Schools,

ໃນວັນພຸດທີ່ຜ່ານມາ, ພວກເຮົາໄດ້ແຈ້ງໃຫ້ທ່ານຊາບກ່ຽວກັບຈໍານວນຜູ້ຕິດເຊື້ອຫຼ້າສຸດທີ່ໄດ້ຮັບຈາກບົດລາຍງານໃນແພັດຟອມອອນລາຍກ່ຽວກັບຂໍ້ມູນພະຍາດອັກເສບປອດ ໂຄວິດ-19 (COVID-19) ປະຈໍາອາທິດຂອງລັດ ແລະ ຈໍານວນຜູ້ຕິດເຊື້ອພະຍາດອັກເສບປອດ ໂຄວິດ-19 (COVID-19) ຢູ່ໃນເມືອງ Lowell ແຫ່ງນີ້ທີ່ມີການສືບຕໍ່ເພີ່ມຂຶ້ນຫຼາຍ. ອີງຕາມຂໍ້ມູນອັບເດດໃນວັນພຸດທີ່ຜ່ານມານີ້, ອັດຕາຈໍານວນຜູ້ຕິດເຊື້ອສະເລ່ຍຂອງເມືອງ Lowell ຕໍ່ພົນລະເມືອງ 100,000 ຄົນ ແມ່ນຢູ່ທີ່ 16.3, ເພີ່ມຂຶ້ນຈາກ 10.9 ຂອງອາທິດແລ້ວນີ້. ເຊິ່ງນີ້ເຮັດໃຫ້ເມືອງ Lowell ຈັດຢູ່ໃນປະເພດ "ສີແດງ" ຫຼື "ມີຄວາມສ່ຽງສູງ" ເປັນອາທິດທີສອງຕິດຕໍ່ກັນ. ນອກນັ້ນ, "ອັດຕາສ່ວນຮ້ອຍຂອງຜົນທົດສອບເປັນບວກ" ຂອງພວກເຮົາ (ເປີເຊັນຂອງການທົດສອບຫາເຊື້ອທີ່ມີຜົນເປັນບວກໃນເມືອງ Lowell ແຫ່ງນີ້) ຍັງຄົງເພີ່ມຂຶ້ນເປັນ 3.57%, ເພີ່ມຂຶ້ນຈາກ 2.71% ຂອງອາທິດແລ້ວນີ້.

ພະແນກສຶກສາຂັ້ນປະຖົມ ແລະ ມັດທະຍົມ ໄດ້ແນະນໍາໃຫ້ເຂດການສຶກສາສືບຕໍ່ກວດສອບຂໍ້ມູນທີ່ໄດ້ຮັບຈາກບົດລາຍງານດ້ານສາທາລະນະສຸກກ່ຽວກັບພະຍາດອັກເສບປອດ ໂຄວິດ-19 (COVID-19) ປະຈໍາອາທິດຂອງເຄືອຈັກກະພົບ ເປັນເວລາສາມອາທິດຕິດຕໍ່ກັນ. ໃນວັນທີ 8 ຕຸລາ 2020 ທີ່ຜ່ານມາ, ຄະນະກໍາມະການດ້ານສຸຂະພາບປະຈໍາເມືອງ Lowell ໄດ້ໃຫ້ຄໍາແນະນໍາແກ່ພວກເຮົາກ່ຽວກັບ "ສາມອາທິດທີ່ຢູ່ໃນລະດັບສີແດງ ແມ່ນເປັນເກນທີ່ສໍາຄັນທີ່ຈະຕ້ອງໃຫ້ການສະໜັບສະໜູນການສຶກສາແບບທາງໄກ." ດັ່ງນັ້ນ, ພວກເຮົາຈຶ່ງຕ້ອງການແຈ້ງໃຫ້ບັນດາຄອບຄົວຂອງນັກຮຽນຮັບຊາບໃຫ້ຫຼາຍທີ່ສຸດເທົ່າທີ່ຈະເປັນໄປໄດ້ **ຖ້າຫາກເມືອງ Lowell ຖືກຈັດຢູ່ໃນປະເພດ "ສີແດງ" ອີກຄັ້ງໃນອາທິດໜ້າ, ເຂດການສຶກສາ ແມ່ນຈະປ່ຽນໄປນໍາໃຊ້ຮູບແບບການສຶກສາທາງໄກຢ່າງເຕັມຮູບແບບ ໂດຍຈະເລີ່ມຕັ້ງແຕ່ມື້ເປີດສົກຮຽນໃນວັນຈັນທີ 19 ຕຸລາ 2020.** ພວກເຮົາຈະສືບຕໍ່ສຶກສາບັນດາຂໍ້ຍົກເວັ້ນທີ່ເປັນໄປໄດ້ສໍາລັບໂປຣແກຣມພິເສດຂະໜາດນ້ອຍ ແລະ ຈະແຈ້ງຂໍ້ຍົກເວັ້ນໃດໆທີ່ອາດມີຄວາມເປັນໄປໄດ້ໃຫ້ຮັບຊາບໃນອາທິດໜ້າ ຫຼັງຈາກທີ່ພວກເຮົາທໍາການກວດສອບຂໍ້ມູນກ່ຽວກັບພະຍາດອັກເສບປອດ ໂຄວິດ-19 (COVID-19) ທີ່ອັບເດດແລ້ວ.

ຕັ້ງແຕ່ເລີ່ມຕົ້ນການສຶກສາໃນຫ້ອງຮຽນ, ພວກເຮົາໄດ້ພົບກໍລະນີທີ່ກ່ຽວຂ້ອງກັບພະຍາດອັກເສບປອດ ໂຄວິດ-19 (COVID-19) ພາຍໃນບັນດາໂຮງຮຽນຂອງພວກເຮົາພຽງແຕ່ຈໍານວນໜ້ອຍດຽວເທົ່ານັ້ນ; ເຖິງຢ່າງໃດກໍຕາມ, ສິ່ງນີ້ຈະເປັນມາດຕະການໃນການປ້ອງກັນສຸຂະພາບ ໂດຍທີ່ພິຈາລະນາເຖິງລະດັບການແຜ່ເຊື້ອຂອງພະຍາດອັກເສບປອດ ໂຄວິດ-19 (COVID-19) ພາຍໃນຊຸມຊົນປະຈໍາເມືອງ Lowell ໃນປະຈຸບັນ. ພວກເຮົາເຫັນເຖິງຜົນກະທົບຂອງການຕັດສິນໃຈອັນຍາກລໍາບາກເຫຼົ່ານີ້ທີ່ມີຕໍ່ບັນດານັກຮຽນ ແລະ ຄອບຄົວຂອງພວກເຂົາ, ດັ່ງນັ້ນຈົດໝາຍສະບັບນີ້ຈຶ່ງມີວັດຖຸປະສົງເພື່ອແຈ້ງໃຫ້ຮັບຊາບຫຼາຍທີ່ສຸດເທົ່າທີ່ຈະເປັນໄປໄດ້ລ່ວງໜ້າກ່ອນການເຜີຍແຜ່ຂໍ້ມູນໃນອາທິດໜ້າ. ມາຮອດຕອນນີ້, ເມືອງ Lowell ຖືກຈັດຢູ່ໃນລະດັບ "ສີແດງ" ພຽງແຕ່ສອງອາທິດເທົ່ານັ້ນ, ສະນັ້ນ **ການສຶກສາໃນຫ້ອງຮຽນຈະຍັງຄົງສືບຕໍ່ໃນອາທິດໜ້າຕາມທີ່ໄດ້ກໍານົດໄວ້.** ພວກເຮົາຈະຕິດຕໍ່ຫາທ່ານໃນຕອນເຊົ້າຂອງວັນພະຫັດໜ້າ ພ້ອມຂໍ້ມູນເພີ່ມເຕີມຫຼັງຈາກທີ່ພວກເຮົາທໍາການກວດສອບຂໍ້ມູນຫຼ້າສຸດທີ່ໄດ້ຮັບຈາກພະແນກສາທາລະນະສຸກ ແລະ ບົດລາຍງານດ້ານສາທາລະນະສຸກກ່ຽວກັບພະຍາດອັກເສບປອດ ໂຄວິດ-19 (COVID-19) ປະຈໍາອາທິດຂອງເຄືອຈັກກະພົບ.

ຂໍຂອບໃຈສໍາລັບຄວາມຮ່ວມມື ແລະ ການປັບຕົວຢ່າງຕໍ່ເນື່ອງຂອງທ່ານໃນຂະນະທີ່ພວກເຮົາດໍາເນີນງານເພື່ອຮັບປະກັນຄວາມປອດໄພໃຫ້ແກ່ບັນດານັກຮຽນ, ຄອບຄົວຂອງພວກເຂົາ ແລະ ເຈົ້າໜ້າທີ່ຂອງພວກເຮົາໃນຊ່ວງເວລາທີ່ຍາກລໍາບາກ ແລະ ບໍ່ມີຄວາມແນ່ນອນເຊັ່ນນີ້.

ດ້ວຍຄວາມນັບຖື ແລະ ຮັກແພງ,

John J. Leahy
Mayor (ເຈົ້າເມືອງ)

Dr. Joel D. Boyd
Superintendent of Schools (ຜູ້ບໍລິຫານໂຮງຮຽນ)